**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຍທຂ PWT

ກະຊວງ ໂຍທາທິການ ແລະຂົນສົ່ງ

ເລກທີ:...໗໖໒໗...../ຍທຂ.

ນະຄອນຫຼວງວຽງຈັນ, ວັນທີ:.໑ ເມສາ 2018.............

ຮຽນ: ທ່ານລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ທີ່ນັບຖື.

ເລື່ອງ: ແຈ້ງຕອບຕໍ່ຄຳສະເໜີຂອງປະຊາຊົນ ທີ່ມີຕໍ່ຂະແໜງການ ຍທຂ ຜ່ານໂທລະສັບສາຍດ່ວນລັດຖະບານ.

- ອີງຕາມ ໜັງສືທາງລັດຖະການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 154/ຫສນຍ, ລົງວັນທີ 16/03/2018.

ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ກ່ຽວກັບການຕອບຄຳສະເໜີຂອງປະຊາຊົນ ທີ່ມີຕໍ່ຂະແໜງການ ຍທຂ ຜ່ານໂທລະສັບສາຍດ່ວນລັດຖະບານ ມີລາຍລະອຽດລຸ່ມນີ້:

1. <u>ປະຊາຊົນແຂວງວຽງຈັນ ສະເໜີໃຫ້ລັດຖະບານຮັບຮູ້ ກ່ຽວກັບການເກັບເງິນຄ່າຂ້າມຂົວປາກກະຍຸງ ເຫັນວ່າພະນັກງານບໍ່ເກັບເງິນຕາມລະບຽບການທີ່ແຈ້ງໃຫ້ຜູ້ໃຊ້ບໍລິການຮັບຮູ້ ເຊັ່ນວ່າ: ການເກັບເງິນລ່ວງເວລາໃນຍາມກາງຄືນ ຕາມແຈ້ງການແມ່ນຕ້ອງໄດ້ຈ່າຍ 15,000 ກີບ/ຄັ້ງ, ແຕ່ປະຈຸບັນແມ່ນເກັບ 20,000-25,000 ກີບ/ຄັ້ງ.</u>

➢ <u>ຕອບ:</u> ອີງຕາມການລາຍງານຂອງຂອງພະແນກ ຍທຂ ແຂວງວຽງຈັນ ໃຫ້ຊາບວ່າ: ການຂຶ້ນລາຄາຄ່າບໍລິການຜ່ານຂົວໃນເວລາກາງຄືນ(ເງິນລ່ວງເວລາ) ດັ່ງກ່າວແມ່ນມີຄວາມເປັນຈິງ ໂດຍແມ່ນກຸ່ມບໍລິສັດມາລີນີ ຈຳກັດ ເປັນຜູ້ດຳເນີນການປັບຂຶ້ນເອງ ໂດຍບໍ່ໄດ້ຮັບອະນຸຍາດຈາກເບື້ອງລັດ. ຕໍ່ກັບບັນຫາດັ່ງກ່າວຫ້ອງວ່າການປົກຄອງແຂວງວຽງຈັນ ຈຶ່ງໄດ້ອອກແຈ້ງການສະບັບເລກທີ 042/ຫປຂ.ວຈ, ລົງວັນທີ: 02/02/2018 ໃຫ້ກຸ່ມບໍລິສັດມາລີນີ ຢຸດຕິການຂຶ້ນລາຄາຄ່າບໍລິການດັ່ງກ່າວນັ້ນ. ແຕ່ໃນພາກປະຕິບັດຕົວຈິງ ມາຮອດປະຈຸບັນບໍລິສັດດັ່ງກ່າວ ຍັງບໍ່ໄດ້ຢຸດເຊົາການເກັບເງິນຄ່າບໍລິການລ່ວງເວລາດັ່ງກ່າວ ແລະ ໄດ້ມີໜັງສືຂອງບໍລິສັດມາລີນີ ສະບັບເລກທີ 0190/ມລນ.18, ລົງວັນທີ 6/2/2018 ຕອບຄືນຫ້ອງວ່າການປົກຄອງແຂວງວຽງຈັນ ກ່ຽວກັບເຫດຜົນ ແລະ ຄວາມຈຳເປັນໃນການເກັບເງິນດັ່ງກ່າວ.

ຕໍ່ບັນຫາດັ່ງກ່າວກະຊວງ ຍທຂ ໃນນາມເຮັດໜ້າທີ່ຄຸ້ມຄອງມະຫາພາກ ເຫັນວ່າການປະຕິບັດສັນຍາສຳປະທານໂຄງການກໍ່ສ້າງ ແລະ ບໍລິການຂົວຂ້າມນ້ຳງືມຈຸດເມືອງເກົ່າ-ບ້ານປາກກະຍຸງ, ເມືອງວຽງຄຳ, ແຂວງວຽງຈັນ ແມ່ນປະຕິບັດຕາມສັນຍາສະບັບ ລົງວັນທີ 13/11/2011, ເຊິ່ງຄູ່ສັນຍາແມ່ນກະຊວງ ແຜນການ ແລະການລົງທຶນ ແລະກຸ່ມບໍລິສັດມາລີນີ ຈຳກັດ, ສ່ວນການເກັບເງິນຄ່າບໍລິການຜ່ານຂົວແມ່ນປະຕິບັດຕາມເງື່ອນໄຂທີ່ກຳນົດໄວ້ໃນບົດວິພາກເສດຖະກິດ ແລະໃນສັນຍານີ້. ຕາມທັດສະນະຂອງກະຊວງ ຍທຂ ສະເໜີວິທີແກ້ໄຂດັ່ງນີ້: ກ່ອນອື່ນສະເໜີໃຫ້ອົງການປົກຄອງແຂວງວຽງຈັນເປັນເຈົ້າການຄົ້ນຄ້ວາວິທີການແກ້ໄຂເພື່ອໃຫ້ບໍລິສັດຢຸດເຊົາການເກັບເງິນລ່ວງເວລາກ່ອນ. ສ່ວນການກວດກາການປະຕິບັດສັນຍາສຳປະທານ ແລະ ການແກ້ໄຂໄລຍະຍາວຮ່ວມກັນ ເພື່ອໃຫ້ມີຄວາມຍຸດຕິທຳ ຕໍ່ແຕ່ລະຝ່າຍ ແມ່ນສະເໜີອົງການປົກຄອງແຂວງວຽງຈັນ ເປັນເຈົ້າພາບຈັດກອງປະຊຸມຮ່ວມ ໂດຍມີກະຊວງແຜນການ ແລະ ການລົງທຶນ, ກະຊວງ

ຍທຂ, ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ປຶກສາຫາລືຊອກວິທີທາງອອກຮ່ວມກັນ ບົນພື້ນຖານສັນຍາທີ່ໄດ້ຕົກລົງກັນ ຄືກັນກັບສັນຍາສໍາປະທານໂຄງການກໍ່ສ້າງທາງ ເລກທີ 16 (ແຕ່ສົ້ນຂົວປາກເຊ-ວັງເຕົ່າ) ເພື່ອນໍາສະເໜີລັດຖະບານພິຈາລະນາ ແລະ ໃຫ້ທິດຊີ້ນໍາແກ້ໄຂຕໍ່ໄປ.

2. <u>ປະຈຸບັນປະຊາຊົນແຂວງ ຈໍາປາສັກ ມີຄວາມສົນໃຈສະເໜີຫາລັດຖະບານ ກ່ຽວກັບການກໍ່ສ້າງເສັ້ນທາງແຕ່ຫຼັກ 9 ຫາເມືອງປາກຊ່ອງ ທີ່ບໍລິສັດ ດວງດີ ໄດ້ຮັບສໍາປະທານ ເມື່ອສ້າງສໍາເລັດແລ້ວຈະມີການເກັບເງິນຄືເສັ້ນທາງວັງເຕົ່າ ບໍ່.</u>

➢ <u>ຕອບ:</u> ໃນວັນທີ 9/2/2018 ທີ່ແຂວງຈໍາປາສັກ, ໄດ້ມີການຈັດກອງປະຊຸມເພື່ອຄົ້ນຄວ້າກ່ຽວກັບການເກັບເງິນຄ່າຜ່ານທາງໃນຮູບແບບ BOT ເສັ້ນທາງເລກທີ 16 (ແຕ່ຂົວປາກເຊ-ວັງເຕົ່າ) ແລະເສັ້ນທາງເລກທີ 16 (ແຕ່ສາມແຍກສາລາຊຽວຫຼັກ 9 ຫາທາງແຍກເລກ 16A) ແຂວງຈໍາປາສັກ; ໂດຍການເປັນປະທານຮ່ວມຂອງທ່ານລັດຖະມົນຕີ ກະຊວງແຜນການການລົງທຶນ, ລັດຖະມົນຕີ ກະຊວງ ຍທຂ, ເຈົ້າແຂວງຈໍາປາສັກ, ຜູ້ຕາງໜ້າຈາກກະຊວງການເງິນ ພ້ອມດ້ວຍບັນພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ. ຜ່ານການຄົ້ນຄວ້າ ປຶກສາຫາລື ແລະປະກອບຄໍາເຫັນຢ່າງກົງໄປກົງມາ ກອງປະຊຸມໄດ້ເປັນເອກະພາບກັນຮັບຮູ້ວ່າ: ການລົງທຶນໃນຮູບແບບ BOT ໂດຍການເກັບຄ່າຜ່ານທາງຕາມທາງຢູ່ແຂວງຈໍາປາສັກ ໄດ້ເຮັດໃຫ້ເກີດມີທາງສຽງຈົ່ມວ່າຈາກສັງຄົມຢ່າງຫລວງຫລາຍ. ສະນັ້ນ, ກອງປະຊຸມຈຶ່ງໄດ້ເປັນເອກະພາບພ້ອມກັນ ຊອກວິທີແກ້ໄຂການເກັບເງິນແບບ BOT ເສັ້ນທາງດັ່ງກ່າວ ໂດຍສະເໜີວິທີແກ້ໄຂເປັນ 03 ທາງເລືອກ ແລະ ກອງປະຊຸມເຫັນດີນໍາສະເໜີລັດຖະບານພິຈາລະນາ ທາງເລືອກທີ່ 3: ສະເໜີປ່ຽນການລົງທຶນແບບ BOT ໃຫ້ໄປເປັນການລົງທຶນຊໍາລະດ້ວຍງົບປະມານຂອງລັດ ເລີ່ມແຕ່ສົກງົບປະມານປີ 2019 ເປັນຕົ້ນໄປ, ໂດຍມີໄລຍະຊໍາລະມູນຄ່າໂຄງການຕາມກົດໝາຍການລົງທຶນຂອງລັດບໍ່ເກີນ 9 ປີ, ໃນນີ້ ເພື່ອບໍ່ໃຫ້ລັດນໍາໃຊ້ງົບປະມານຫລວງຫລາຍມາຊໍາລະຄ່າການລົງທຶນ, ສະເໜີມອບໃຫ້ແຂວງຈໍາປາສັກເກັບຄ່າຜ່ານທາງຢູ່ຈຸດດຽວທີ່ເໝາະສົມ,ໃນລາຄາເກັບຄ່າຜ່ານທາງທີ່ສົມເຫດສົມຜົນ ຄາດຄະເນເບື້ອງຕົ້ນ ສະເໜີກິໂລແມັດໜຶ່ງປະມານ 200 ກີບ (ຕາມບົດລາຍງານຕໍ່ທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 220/ຍທຂ, ລົງວັນທີ 2/3/2018). ພາຍຫລັງລັດຖະບານມີຄໍາເຫັນຊີ້ນໍາແລ້ວ ຈຶ່ງສະເໜີແຕ່ງຕັ້ງຄະນະກໍາມະການ ເພື່ອກວດກາຄິດໄລ່ລາຄາຫືອໜ່ວຍມູນຄ່າໂຄງການ, ກວດກາມາດຕະຖານເຕັກນິກ ແລະບັນດາໜ້າວຽກກໍ່ສ້າງຄືນໝົດ ເພື່ອໃຫ້ຖືກກັບຄວາມເປັນຈິງສົມເຫດສົມຜົນ.

3. <u>ປະຊາຊົນແຂວງວຽງຈັນ ສ່ອງແສງໃຫ້ລັດຖະບານຮັບຮູ້ເຖິງການປະຕິບັດໜ້າທີ່ຂອງພະນັກງານໜ່ວຍງານຄຸ້ມຄອງພາຫະນະແຂວງວຽງຈັນ. ຊຶ່ງໃນວັນທີ 17/01/2018 ປະຊາຊົນເຂົ້າໄປເສຍຄ່າເຕັກນິກລົດໃຫຍ່ ປະກົດວ່າບໍ່ມີພະນັກງານຮັບຜິດຊອບຈັກທ່ານ ເມື່ອສອບຖາມນັກຮຽນຝຶກງານເລີຍຮັບຮູ້ຂໍ້ມູນວ່າ ພະນັກງານມີງານລ້ຽງຊຸມແຊວ. ຕໍ່ບັນຫາດັ່ງກ່າວ ຈຶ່ງສ່ອງແສງໃຫ້ລັດຖະບານຮັບຮູ້.</u>

➢ <u>ຕອບ:</u> ອີງຕາມການລາຍງານຂອງຂອງພະແນກ ຍທຂ ແຂວງວຽງຈັນ ໃຫ້ຊາບວ່າ: ສູນກວດກາເຕັກນິກລົດຍົນແຂວງວຽງຈັນ ເປັນຈຸດບໍລິການ, ກວດກາທາງດ້ານເຕັກນິກຂອງພາຫະນະທຸກປະເພດໃນແຂວງວຽງຈັນ ແລະ ຕ່າງແຂວງປະຈຸບັນສູນກວດກາເຕັກນິກແຫ່ງນີ້ຍັງເປັນຂອງເອກະຊົນຄຸ້ມຄອງໂດຍກົງ (ຍັງຢູ່ໃນຊ່ວງສໍາປະທານ). ແຕ່ໃນວັນທີ 17/1/2018 ໄດ້ມີງານດອງຂອງພະນັກງານສູນດັ່ງກ່າວ ຊຶ່ງໃນຕອນເຊົ້າສູນກວດກາເຕັກນິກກໍ່ໄດ້ເປີດເຮັດວຽກປົກກະຕິ. ແລະ ໃນຕອນບ່າຍມື້ນັ້ນ ພະນັກງານຂອງສູນໄດ້ໄປຮ່ວມງານດອງຂອງອ້າຍນ້ອງພະນັກງານ ຈຶ່ງບໍ່ໄດ້ເປີດເຮັດວຽກ ເຮັດໃຫ້ຜູ້ມາໃຊ້ບໍລິການບໍ່ສາມາດລໍຖ້າໄດ້. ກະຊວງ ຍທຂ ເຫັນວ່າການສ່ອງແສງຂອງປະຊາຊົນແມ່ນຄວາມເປັນຈິງ ແລະ

ການບໍລິການຮັບໃຊ້ປະຊາຊົນດ້ວຍຄວາມເອົາໃຈໃສ່ ແມ່ນໜ້າທີ່ຂອງພະນັກງານ-ລັດຖະກອນ ລວມທັງຜູ້ສໍາປະທານການບໍລິການດັ່ງກ່າວ ຕາມລະບຽບການກໍານົດໄວ້, ຖ້າໃນກໍລະນີຈະຢຸດການບໍລິການຊົ່ວຄາວ ກໍ່ຕ້ອງໄດ້ແຈ້ງລ່ວງໜ້າຕາມລະບຽບການ. ສະນັ້ນ, ໃນນາມຜູ້ເຮັດໜ້າທີ່ຄຸ້ມຄອງມະຫາພາກ ໄດ້ຊີ້ນໍາພະແນກ ຍທຂ ແຂວງວຽງຈັນ ຕິດຕາມກວດກາການປະຕິບັດວຽກງານຂອງກອງຄຸ້ມຄອງພາຫະນະ ແລະ ການຂົນຂົ່ງ ແຂວງວຽງຈັນ ຢ່າງເຂັ້ມງວດ ແລະ ປະຕິບັດວຽກງານໃຫ້ດີຂຶ້ນ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖື

ລັດຖະມົນຕີ

ດຣ ບຸນຈັນ ສິນທະວົງ

<u>ບ່ອນນໍາສົ່ງ:</u>

- ທ່ານ ເລຂາທິການສະພາແຫ່ງຊາດ 01 ສະບັບ ເພື່ອຊາບ.
- ທ່ານ ຮອງລັດຖະມົນຕີ ທ່ານລະ 01 ສະບັບ.
- ສໍານັກເກັບມ້ຽນ 02 ສະບັບ.